# ໐໗. ຊຽງໝ້ຽງໄປໄຫ້ນຳຣາຊຄຣູ

ຍັງມີຣາຊຄຣູເຖົ້າອົງນຶ່ງ ເພິ່ນໄດ້ເສັງຊີວິດດ້ວຍຄວາມເຖົ້າຊະລາການ , ແຕ່ວ່າພະຣາຊຄຣູອົງນີ້ບໍ່ມີຍາດພີ່ນ້ອງໃກ້ສິດ ຕິດແທດຈັກຄົນ
ເມື່ອເສັງຊີວິດກໍເປັນໜ້າສົມເພດເວດທນາບໍ່ມີຜູ່ໃດຈະໃຫ້ຈະທຸກໂສກຫງວມເຫງົານຳ,
ຍ້ອນວ່າຣາຊຄຣູເປັນພຣະ ຫລັກບ້ານຫລັກເມືອງ ດັ່ງນັ້ນ ພຣະຍາຈຶ່ງສັ່ງໃຫ້ ຊຸມສນົມທັງຫລາຍ
ໄປຮ້ອງໄຫ້ ອາໄລອາວອນ ນຳທ່ານຣາຊຄຣູ ພວກນາງສນົມຈຶ່ງໄປ ອ້ອນວອນໃຫ້ຊຽງໝ້ຽງໄປນຳກັນ.

ເມື່ອໄປຮອດວັດບ່ອນສົບຣາຊຄຣູແລ້ວ ນາງສນົມບາງຄົນ ກໍທຳທ່າໄຫ້
ແຕ່ຫລາຍຄົນກໍບໍ່ສາມາດໄຫ້ໄດ້ ເພາະມັນບໍ່ມີ ຄວາມສະທ້ອນໃຈແນວໃດ
ຍ້ອນວ່າຣາຊຄຣູບໍ່ແມ່ນຍາດຕິພີ່ນ້ອງ ຂອງພວກເຂົາ, ດັ່ງນັ້ນ ການທີ່ພຍາ ສັ່ງໃຫ້ພວກເຂົາມາໄຫ້
ຈຶ່ງມີບາງຄົນພັດຍັງຫົວສະອຶກສະອື້ອຍຢູ່, ເມື່ອເຫັນວ່າຈະບໍ່ໄດ້ຕາມຄວາມພຍາສັ່ງ
ເຂົາຈຶ່ງອ້ອນວອນໃຫ້ຊຽງໝ້ຽງມາໄຫ້, ແຕ່ຊຽງໝ້ຽງປະຕິເສດວ່າ ພຍາບອກໃຫ້ແຕ່ສນົມມາໄຫ້
ບໍ່ໄດ້ສັ່ງໃຫ້ເຂົາໄຫ້ ຂຶ້ນມາອ້ອນວອນໃຫ້ໄຫ້ນຳກັນທ່ອນຊິເປັນ, ແຕ່ສາວສນົມກໍນຽວວອນບໍ່ເລີກບໍ່ແລ້ວ ;
ໃນທີ່ສຸດຊຽງໝ້ຽງກໍເກີດມີຄວາມອິດູ ສົງສານ ພວກສາວສນົມ ເພາະພວກເຂົາເວົ້າວ່າ
ຖ້າອ້າຍຊຽງພາໄຫ້ ພວກເຂົາກໍຊິໄຫ້ນຳ

ຊຽງໝ້ຽງຈຶ່ງຍ້ອນຖາມພວກນາງສນົມວ່າ ຄັນເຮົາເຮັດແນວໃດ ຫລື ໄຫ້ແນວໃດ
ພວກເຈົ້າຊິເຮັດຊິໄຫ້ນຳແທ້ໆບໍ ? ພວກສາວສນົມກໍພາກັນຮັບປາກວ່າ ຈະ
ປະຕິບັດຕາມຊຽງໝ້ຽງທຸກຢ່າງ ; ເຫັນວ່າໄດ້ໂອກາດດີ ຊຽງໝ້ຽງຈຶ່ງກົ້ມເຮັດໂກ່ງໂກ້ຍເອົາຫົວທົ່ງລົງດິນ
ປະໃຫ້ໂຄຍກັບທຳຢ່ອນລົງເປັນພື້ວ, ທັງເອົາມືເຕາະຕ່ອຍໄປມາ ທັງພ່ອງທຳທ່າດີ້ນ ແລະ
ຮ້ອງຄາງຄືກັບເຈັບປວດ ແລບລີ້ນປີ້ນຕາ ແລ້ວທຳທ່າຮ້ອງໄຫ້ຮ່ຳໄຮວ່າ ໂອຍນໍ ! ທ່ານຣາຊຄຣູ ເອີຍ !
ມາດ່ວນຕາຍຈາກໄປແລ້ວນໍ ລູກເມັຽກໍບໍ່ມີໄດ້ນຳເຂົາ, ບວດຕັ້ງແຕ່ນ້ອຍ ບໍ່ພໍ້ເຕົ່າຫລັງຂົນ ມາຕາຍຜູ່ດຽວ
ເສັງດາຍທຳກັບໂຄຍເດ ມັນຊິເນົ່າຊິເປື່ອຍຖິ້ມລ້າແລ້ວນໍ !

ພໍໄດ້ຍິນສຽງໄຫ້ຈົ່ມໄຫ້ວ່າ ຂອງຊຽງໝ້ຽງແນວນັ້ນ,
ພວກນາງສາວສນົມກໍພາກັນຫົວແຕກໂຄບຂື້ນ, ຊຽງໝ້ຽງເຫັນວ່າ ສາວສນົມບໍ່ປະຕິບັດຕາມຕົນ
ຈຶ່ງຈັບໄດ້ໄມ້ແສ້ຕີສາວສນົມ ຈົນຫລັງໃຄ່ ຫລັງໂພງແລ້ວພາກັນແລ່ນປົບຕາຍໄປໄຫວ້ຕໍ່ພຍາ,
ພວກນາງສນົມໄດ້ເລົ່າເຫດການທີ່ເກີດຂື້ນທັງໝົດຊູ່ພຍາຟັງ ພຍາໄດ້ຖາມສາລວທັງຫລາຍ
ວ່າພວກສູເຮັດແນວໃດໃຫ້ມັນແດ່ ຊຽງໝ້ຽງຈຶ່ງໄດ້ທຸບຕີຈົນໃຄ່ຈົນໂພງ, ສາວສນົມຕອບວ່າ ບໍ່ໄດ້ເຮັດ
ແລະ ບໍ່ໄດ້ ເວົ້າແນວໃດ ຊຽງໝ້ຽງຫາກຮ້າຍເອງ ເອົາແສ້ໄລ່ຕີພວກຕົນຢ່າງບໍ່ເລືອກໜ້າເລີຍ.

ປະຣິງພາບ ສີສົມສັກ

ຝ່າຍພຍາໄດ້ຟັງຄຳເວົ້າຂອງພວກສາວສນົມຄືແນວນັ້ນ
ກໍສັ່ງໃຫ້ຄົນໄຊ້ໄປນຳເອົາຕົວຊຽງໝ້ຽງມາຫາດ່ວນ, ເມື່ອຄົນໄຊ້ໄປເອີ້ນຊຽງກໍຮູ້ຕົວເອງດີວ່າ
ຕ້ອງແມ່ນພວກສາວສນົມໄປຟ້ອງຕໍ່ພຍາເປັນແນ່ແທ້, ພໍແຕ່ຊຽງໝ້ຽງຂຶ້ນໄປຫາພຍາກໍຖາມໂລດ
ວ່າເປັນຫຽັງຊຽງໝ້ຽງຈຶ່ງຕີ ຈຶ່ງຊຸ້ນສາວສນົມຈົນເຈັບຈົນປວດ ຄືແນວນີ້ ! ຊຽງໝ້ຽງກໍຕອບພຍາວ່າ
ຕົວຜູ້ຂ້າໄດປະຕິບັດ ຕາມຄຳສັ່ງຂອງພຣະອົງວ່າ ໃຫ້ພານາງສນົມໄປໄຫ້ນຳຣາຊຄຣູ
ເມື່ອໄປຮອດສົບຂອງຣາຊຄຣູ ຜູ່ຂ້າກໍໄຫ້ແທ້ໄຫ້ວ່າສແດງຄວາມໂສກເສົ້າໂສການຳຣາຊຄຣູ
ແຕ່ວ່າ ນາງສນົມນັ້ນຕິ ບໍ່ຍອມພາກັນໄຫ້ຊໍ້າ
ບໍ່ໝຳຍັງພາກັນຫົວສະອຶກສະອ້ອຍ
ທັງຕໍ່ແຍ່ບ່າວນ້ອຍ ຜູ່ຂ້າອົດບໍ່ໄດ້ ຈຶ່ງຈັບເອົາໄມ້ແສ້ມາຊຸ້ນຕີ
ສາວສນົມພວກນີ້ຖ່ອຍຮ້າຍບໍຟັງຄວາມທ່ານພຍາຈັກດີ້ ;
ພຍາໄດ້ຟັງຄຳກໍຮ້າຍໃຫ້ພວກສາວສນົມໝຸ່ມທັງຫລາຍວ່າ ດີແລ້ວທີ່ບັກຊຽງໝ້ຽງມັນບໍ່ຕັດຄໍສູຖິ້ມ

ຕໍ່ມື້ນຶ່ງ ຂນະທີ່ພຍາພວມຄຸ້ງວໝາກຢູ່ໃນໂຮງນັ້ນ, ຊຽງໝ້ຽງກໍຫາໂອກາດ
ເຂົ້າໄປຄຸ້ງວໝາກດອມພຍາ ເຕໃນໃຈຂອງຊຽງໝ້ຽງແທ້ແມ່ນ ຢາກຫາໂອກາດດ່າ
ພຍາຫລົ້ນຕາມວາດ, ຊຽງໝ້ຽງເອົາໝ້ຽງໝາກຍັດໃສ່ສົບຈົນເຕັມສວດຈົ້ກໍ້ ແລ້ວກໍເອົາ
ນ້ຳໝາກທາທາງນອກບ່ອນສົບມັນສວດນັ້ນ, ພໍແຕ່ພຍາຫລຽວເຫັນ ກໍຫ້ວງຂຶ້ນວ່າ ໂຫ້
ສົບຊຽງຄືມາເຫືວແທ້ ແນມເບິ່ງແກ້ມແກ່ນເຫລື້ອມປານດັ່ງດວງມະນີ
ແກ້ມເຄັ່ງໂພງຄືຜີເປັນຕາຢ້ານແທ້, ພຍາເວົ້າຕື່ມວ່າ ບັກຊຽງໝ້ຽງມຶງແນມເບິ່ງແກ້ມຂອງກູ
ເບິ່ງດູຊິຄືກັບຂອງມຶງບໍ ? ຊຽງໝ້ຽງຕອບພ້ອມບາດຽວໂລດວ່າ ໂອຍ !
ແກ້ມທ່ານພຍາຈັ່ງແມ່ນຮົງໆໃສດັ່ງທຳໝາເຖົ້າແທ້ເດ !.
ພຍາໄດ້ຍິນຄວາມຫ້ວງຂອງຊຽງໝ້ຽງແບບດູຖູກກໍຮ້າຍເປົ້ງ ໆ ຂຶ້ນ ທັງຈາວ່າຊິ
ເອົາດາບຕັດຄໍບັກຊຽງ ໃຫ້ມັນຕາຍໄປຕໍ່ ໜ້າ ຕໍ່ຕາໂລດ, ແຕ່ຊຽງກໍຮູ້ວິທີແກ້ໄຂ ຢ່າງໄວວາ ມັນຈຶ່ງທຳທ່າ
ກົ້ມຂາບ ແລ້ວກ່າວຂໍຂມາໂທດ ນຳທ່ານພຍາ ວ່າ ບໍ່ແມ່ນດັ່ງທຳໝາ ເຖົ້າດອກຂ້ານ້ອຍ
ແກ້ມທ່ານພຍາ ໃສ
ເຫຼື້ອມດັ່ງນໍພຸ້ນນາ !!!

ເຊີນອ່ານຕໍ່ເຣື່ອງທີ່ເກົ້າໃນເດືອນໜ້າ
໐໘. ຕົວະພຍາກິນຂີ້ແຮ້ງ